ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Lao People’s Democratic Republic

Peace Independence Democracy Unity Prosperity

# ບົດລາຍງານສະຖິຕິການເງິນແຫ່ງລັດ ປະຈຳ 6 ເດືອນ ປີ 2021

# Government Finance Statistics

# Semi-Annual Report 2021





ກະຊວງການເງິນ

Ministry of Finance

# ບົດລາຍງານສະຖິຕິການເງິນແຫ່ງລັດປະຈຳ 6 ເດືອນ ປີ 2021

## ສະພາບລວມການຈັດຕັ້ງປະຕິບັດງົບປະມານປະຈຳ 6 ເດືອນ ປີ 2021

ບົດລາຍງານສະບັບນີ້ໄດ້ຮວບຮວມຂໍ້ມູນສະຖິຕິຂອງການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໄລຍະ 6 ເດືອນຕົ້ນ ປີ 2021 ຕາມມາດຕະຖານສາກົນ GFS ( ເຊິ່ງລາຍຮັບບໍ່ໄດ້ລວມເອົາລາຍຮັບຈາກການຂາຍຊັບສິນ ແລະ ລາຍຮັບເກັບຄືນເງິນກູ້ຢືມຕົ້ນທຶນປ່ອຍຕໍ່ ນັບຕັ້ງແຕ່ເດືອນມັງກອນ ເຖິງ ເດືອນ ມິຖຸນາ ປີ 2021) ແລະ ຍັງໄດ້ສົມທຽບກັບໄລຍະດຽວກັນຂອງປີທີ່ຜ່ານມາ ເພື່ອຮັບຮູ້ເຖິງການປ່ຽນແປງຂອງການຈັດຕັ້ງປະຕິບັດງົບປະມານໃນໄລຍະຜ່ານມາ ແລະ ເພື່ອເປັນຂໍ້ມູນເບື້ອງຕົ້ນ ໃນການສຶກສາຄົ້ນຄວ້າຂັ້ນຕໍ່ໄປ.

ສະພາບເສດຖະກິດມະຫາພາກ ຂອງ ສປປ ລາວ ໃນໄລຍະ ປີ 2021 ຍັງມີຄວາມບໍ່ແນ່ນອນສູງ, ສ່ວນໜຶ່ງຍ້ອນຜົນກະທົບຈາກການແຜ່ລະບາດພະຍາດ ໂຄວິດ-19 ຮອບສອງພາຍໃນປະເທດ ທີ່ເລີ່ມແຕ່ເດືອນເມສາ ເປັນຕົ້ນມາ ທີ່ມີຜູ້ຕິດເຊື້ອໃໝ່ເພີ່ມຂຶ້ນ ສິ່ງຜົນກະທົບຕໍ່ເສດຖະກິດ ເປັນວົງກວ້າງ ເຮັດໃຫ້ ລັດຖະບານຕ້ອງໄດ້ປະຕິບັດມາດຕະການປ້ອງກັນຢ່າງເຄັ່ງຄັດ ແລະ ເຂັ້ມງວດ. ພ້ອມນັ້ນ, ຍັງສິ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2021 ພໍສົມຄວນ ໂດຍສະເພາະຕໍ່ການຈັດເກັບລາຍຮັບງົບປະມານແຫ່ງລັດ. ຄຽງຄູ່ກັນນັ້ນ, ລັດຖະບານ ໄດ້ວາງນະໂຍບາຍ ແລະ ມາດຕະການທາງດ້ານການເງິນຫຼາຍດ້ານ ເພື່ອຫຼຸດຜ່ອນຜົນກະທົບຂອງປະຊາຊົນ, ບັນດາບໍລິສັດ ແລະ ຜູ້ປະກອບການ ທົ່ວສັງຄົມ ເປັນຕົ້ນ ທາງດ້ານລາຍຮັບໄດ້ປະຕິບັດນະໂຍບາຍຍົກເວັ້ນ ການເກັບອາກອນລາຍໄດ້ຈາກເງິນເດືອນຂອງຜູ້ອອກແຮງງານ ທັງພາກລັດ ແລະເອກະຊົນ ທີ່ມີລາຍໄດ້ 5 ລ້ານກີບລົງມາ ໃນໄລຍະ ເດືອນ ເມສາ, ພຶດສະພາ ແລະ ມິຖຸນາ; ປະຕິບັດນະໂຍບາຍຍົກເວັ້ນອາກອນລາຍໄດ້ ຂອງຈຸນລະວິສາຫະກິດ, ເລື່ອນການເສຍຄ່າທຳນຽມທາງ ແລະ ອື່ນໆ. ທາງດ້ານລາຍຈ່າຍ, ກະຊວງການເງິນ ໄດ້ສະເໜີລັດຖະບານ ອະນຸມັດໃຫ້ມີການປະຢັດ ແລະ ໂຈະບາງລາຍຈ່າຍທີ່ບໍ່ທັນຈຳເປັນຈຳນວນໜຶ່ງ ໂດຍສະເພາະລາຍຈ່າຍຊື້ໃໝ່, ລາຍຈ່າຍໄປວຽກທາງການ ແລະ ລາຍຈ່າຍອື່ນໆ ເພື່ອບໍ່ໃຫ້ກະທົບຫຼາຍຕໍ່ການຂາດດຸນງົບປະມານ.

ຜົນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໃນໄລຍະ 6 ເດືອນຕົ້ນປີ 2021, ລາຍຮັບງົບປະມານທັງໝົດ ບັນລຸໄດ້ 10.954 ຕື້ກີບ (ທຽບໄດ້ 6,0% ຂອງ GDP ຫຼື 41,9% ຂອງແຜນ), ທຽບໃສ່ໄລຍະດຽວກັນຂອງປີ 2020 ເພີ່ມຂຶ້ນ 8,9%. ເນື່ອງຈາກການຈັດເກັບລາຍຮັບພາຍໃນ ເພີ່ມຂຶ້ນ 8,3% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ແລະ ລາຍຮັບຈາກການຊ່ວຍເຫຼືອລ້າ ເພີ່ມຂຶ້ນ 1,2% ທຽບໃສ່ໄລຍະດຽວກັນ.

ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານ ໃນໄລຍະ 6 ເດືອນຕົ້ນ ປີ 2021 ບັນລຸໄດ້ 10.937 ຕື້ກີບ (ທຽບໄດ້ 6,0% ຂອງ GDP ຫຼື 34,6% ຂອງແຜນ) ຖ້າທຽບໃສ່ ໄລຍະດຽວກັນ ຫຼຸດລົງ 13,3% ເນື່ອງຈາກ ລາຍຈ່າຍລົງທຶນ ຫຼຸດລົງ 46,0% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ໃນຂະນະທີ່ ລາຍຈ່າຍບໍລິຫານປົກກະຕິ ເພີ່ມຂຶ້ນ 5,9% ທຽບໃສ່ໄລຍະດຽວກັນ.

ອີງຕາມຜົນການຈັດຕັ້ງປະຕິບັດໃນຄັ້ງນີ້ ຊີ້ໃຫ້ເຫັນວ່າ ໃນໄລຍະ 6 ເດືອນຕົ້ນປີ 2021 ບັນລຸໄດ້ເກີນດຸນ 17 ຕື້ກີບ ໃນນີ້, ການດຸ່ນດ່ຽງລາຍຮັບພາຍໃນຕໍ່ລາຍຈ່າຍບໍລິຫານປົກກະຕິສາມາດປະຕິບັດໄດ້ເກີນດຸນ 1.486 ຕື້ກີບ ເທົ່າກັບ 0,8% ຂອງ GDP ສົ່ງຜົນໃຫ້ດຸນງົບປະມານລວມເກີນດຸນ 0,01% ຂອງ GDP.

**ຕາຕະລາງ 1:** ການຈັດຕັ້ງປະຕິບັດລາຍຮັບພາຍໃນ ໄລຍະ 6 ເດືອນ ປີ 2021 ທຽບກັບໄລຍະດຽວກັນ

(ຫົວໜ່ວຍ ຕື້ກີບ)

| ລ/ດ | ເນື້ອໃນ | 6 ເດືອນ 2018 | 6 ເດືອນ 2019 | 6 ເດືອນ 2020 | 6 ເດືອນ 2021 | % ທຽບປີ 2020 |
|---|---|---|---|---|---|---|
| I | **ລາຍຮັບຈາກພາສີ-ອາກອນ** | **8,780** | **9,486** | **7,620** | **8,507** | **11.6%** |
| 1 | ອາກອນກຳໄລ | 749 | 922 | 565 | 846 | 49.8% |
| 2 | ອາກອນລາຍໄດ້ | 886 | 894 | 654 | 661 | 1.1% |
| 3 | ພາສີທີ່ດິນ | 137 | 112 | 147 | 62 | -57.8% |
| 4 | ອາກອນມູນຄ່າເພີ່ມ | 2,765 | 3,191 | 2,244 | 2,529 | 12.7% |
| 5 | ອາກອນຊົມໃຊ້ | 2,710 | 2,713 | 1,948 | 2,374 | 21.9% |
| 6 | ພາສີຂາເຂົ້າ | 497 | 608 | 533 | 402 | -24.6% |
| 7 | ພາສີຂາອອກ | 16 | 24 | 8 | 189 | 2270.5% |
| 8 | ຄ່າທຳນຽມຈົດທະບຽນ | 2 | 3 | 3 | 21 | 571.9% |
| 9 | ຄ່າທຳນຽມຕ່າງໆ | 444 | 513 | 1,014 | 915 | -9.8% |
| 10 | ຄ່າຊັບພະຍາກອນທຳມະຊາດ | 349 | 343 | 290 | 366 | 26.5% |
| 11 | ຄ່າພາກຫຼວງຈາກໄມ້ | 30 | 4 | 9 | 10 | 12.6% |
| 12 | ຄ່າພາກຫຼວງຈາກໄຟຟ້າ | 195 | 161 | 206 | 132 | -35.8% |
| II | **ລາຍຮັບທີ່ບໍ່ແມ່ນພາສີ-ອາກອນ** | **1,542** | **1,841** | **1,111** | **1,392** | **25.4%** |
| 1 | ລາຍຮັບຈາກຄ່າເຊົ່າ | 19 | 21 | 20 | 23 | 12.4% |
| 2 | ຄ່າສຳປະທານ | 32 | 35 | 45 | 24 | -48.2% |
| 3 | ຄ່າປັບໃໝ | 14 | 12 | 19 | 8 | -58.2% |
| 4 | ລາຍຮັບບໍລິຫານວິຊາການ | 179 | 216 | 195 | 267 | 36.9% |
| 5 | ເງິນປັນຜົນ | 716 | 747 | 368 | 445 | 20.7% |
| 6 | ດອກເບ້ຍເງິນກູ້ | 169 | 298 | 98 | 87 | -10.8% |
| 7 | ຄ່າບິນຜ່ານ | 373 | 449 | 319 | 130 | -59.4% |
| 8 | ກອງທຶນຮັກສາປ່າໄມ້ | - | 10 | 2 | 351 | 18127.1% |
| 9 | ລາຍຮັບອື່ນໆ | 38 | 53 | 43 | 57 | 34.3% |
| III | **ລວມລາຍຮັບພາຍໃນ** | **10,322** | **11,327** | **8,730** | **9,899** | **13.4%** |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ເສັ້ນສະແດງ 1 :** ລາຍຮັບຈາກການຊ່ວຍເຫຼືອລ້າ 6 ເດືອນ ປີ 2021 ທຽບກັບໄລຍະດຽວກັນ

(ຫົວໜ່ວຍ: ຕື້ກີບ)




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ຕາຕະລາງ 2:** ການຈັດຕັ້ງປະຕິບັດລາຍຈ່າຍທັງໝົດ 6 ເດືອນ ປີ 2021 ທຽບກັບໄລຍະດຽວກັນ

(ຫົວໜ່ວຍ ຕື້ກີບ)

| ລ/ດ | ເນື້ອໃນ | 6 ເດືອນ 2018 | 6 ເດືອນ 2019 | 6 ເດືອນ 2020 | 6 ເດືອນ 2021 | % ທຽບປີ 2020 |
|---|---|---|---|---|---|---|
| 1 | ເງິນເດືອນ ແລະ ເງິນອຸດໜູນ | 5,315 | 5,485 | 5,362 | 5,733 | 6.9% |
| | ເງິນເດືອນພື້ນຖານ | 4,286 | 4,388 | 4,392 | 4,525 | 3.0% |
| | ເງິນອຸດໜູນ | 1,029 | 1,097 | 970 | 1,208 | 24.6% |
| 2 | ລາຍຈ່າຍດັດສົມສິ່ງເສີມ | 990 | 1,146 | 991 | 1,072 | 8.2% |
| | ນະໂຍບາຍ ແລະ ຊ່ວຍໜູນອື່ນໆ | 683 | 761 | 716 | 775 | 8.3% |
| | ດັດສົມທົ່ວໄປ | 297 | 379 | 261 | 297 | 13.6% |
| | ປະກອບສ່ວນອົງການຈັດຕັ້ງ | 10 | 5 | 14 | - | -100.0% |
| 3 | ບໍລິຫານ ແລະ ຊື້ໃໝ່ | 816 | 849 | 476 | 537 | 12.8% |
| 4 | ສົ່ງຄືນເງິນ VAT | - | - | - | 5 | #DIV/0! |
| 5 | ຊຳລະດອກເບ້ຍ | 1,110 | 1,355 | 1,364 | 1,034 | -24.2% |
| | ຕ່າງປະເທດ | 921 | 1,127 | 1,207 | 826 | -31.5% |
| | ພາຍໃນ | 189 | 228 | 157 | 207 | 31.8% |
| 6 | ລາຍຈ່າຍອື່ນໆ | 11 | 14 | 52 | 32 | -38.3% |
| | ເງິນແຮລັດຖະບານ | 11 | 14 | 52 | 32 | -38.3% |
| | ຄັງສະສົມແຫ່ງລັດ | - | - | - | - | #DIV/0! |
| I | **ລາຍຈ່າຍບໍລິຫານປົກກະຕິ** | **8,242** | **8,849** | **8,245** | **8,413** | **2.0%** |

| | | | | | | |
|---|---|---|---|---|---|---|
| **II** | **ລາຍຈ່າຍລົງທຶນຂອງລັດ** | **6,440** | **2,536** | **2,563** | **2,524** | **-1.5%** |
| 1 | ລົງທຶນພາຍໃນ | 1,580 | 1,187 | 523 | 630 | 20.6% |
| 2 | ລົງທຶນຕ່າງປະເທດ | 4,860 | 1,348 | 2,041 | 1,894 | -7.2% |
| | ກູ້ຢືມເປັນໂຄງການ | 4,051 | 1,109 | 1,166 | 839 | -28.1% |
| | ຊ່ວຍເຫຼືອລ້າເປັນໂຄງການ | 298 | 240 | 303 | 332 | 9.7% |
| | ຊ່ວຍເຫຼືອລ້າບໍ່ເປັນໂຄງການ | 511 | - | 572 | 723 | 26.5% |
| **III** | **ລວມລາຍຈ່າຍທັງໝົດ** | **14,683** | **11,385** | **10,808** | **10,937** | **1.2%** |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ຕາຕະລາງ 3:** ການດຸ່ນດ່ຽງງົບປະມານແຫ່ງລັດ ປະຈຳ 6 ເດືອນ ປີ 2021 (ຫົວໜ່ວຍ:ຕື້ກີບ)

| ເນື້ອໃນ | ແຜນປີ 2021 | ປະຕິບັດໄດ້ | %ແຜນປີ 2021 | %ຕໍ່ GDP |
|---|---|---|---|---|
| **ລາຍຮັບທັງໝົດ** | **26,138** | **10,954** | **41.9%** | **6.00%** |
| **ລາຍຮັບພາຍໃນ** | **23,718** | **9,899** | **41.7%** | **5.42%** |
| ລາຍຮັບຈາກພາສີ-ອາກອນ | 19,985 | 8,507 | 42.6% | 4.66% |
| ລາຍຮັບບໍ່ແມ່ນພາສີອາກອນ | 3,733 | 1,392 | 37.3% | 0.76% |
| **ລາຍຮັບຈາກການຊ່ວຍເຫຼືອລ້າ** | **2,420** | **1,055** | **43.6%** | **0.58%** |
| ເງິນຊ່ວຍເຫຼືອລ້າທີ່ເປັນໂຄງການ | 720 | 332 | 46.1% | 0.18% |
| ເງິນຊ່ວຍເຫຼືອບໍ່ເປັນໂຄງການ | 1,700 | 723 | 42.5% | 0.40% |
| **ລວມຍອດລາຍຈ່າຍ** | **31,583** | **10,937** | **34.3%** | **5.99%** |
| **ລາຍຈ່າຍບໍລິຫານ** | 21,277 | 8,413 | 39.0% | 4.61% |
| **ລາຍຈ່າຍລົງທຶນ** | 10,306 | 2,524 | 24.5% | 1.38% |
| **ດຸ່ນດ່ຽງຮັບພາຍໃນຕໍ່ລາຍຈ່າຍບໍລິຫານ** | 2,441 | 1,486 | 60.9% | 0.81% |
| **ດຸ່ນດ່ຽງລວມ** | -5,445 | 17 | -0.3% | 0.01% |
| **ດຸ່ນດ່ຽງບໍ່ລວມເງິນຊ່ວຍເຫຼືອລ້າ** | -7,865 | -1,038 | 12.7% | -0.57% |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ